ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

---------------------

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເລກທີ 5418/ ຮສສ.

ນະຄອນຫລວງວຽງຈັນ, ວັນທີ 10/12/2007

# ຂໍ້ຕົກລົງ

## ວ່າດ້ວຍການອະນຸຍາດນໍາເຂົ້າ

## ແຮງງານຕ່າງປະເທດ ທີ່ມາເຮັດວຽກຢູ່ ສປປ ລາວ

- ອີງຕາມກົດໝາຍວ່າດ້ວຍແຮງງານ ສະບັບເລກທີ 06/ສພຊ, ລົງວັນທີ 27/12/2006.
- ອີງຕາມດໍາລັດນາຍົກລັດຖະມົນຕີ, ສະບັບເລກທີ 138/ນຍ, ລົງວັນທີ 04/5/2007 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ.
- ເພື່ອເຮັດໃຫ້ການນໍາເຂົ້າ ແລະ ການຄຸ້ມຄອງນໍາໃຊ້ແຮງງານຕ່າງປະເທດເຂົ້າສູ່ລະບຽບກົດໝາຍຂອງ ສປປ ລາວ.

**ລັດຖະມົນຕີວ່າການກະຊວງແຮງງານ ແລະ ສະຫວັດດີການສັງຄົມອອກຂໍ້ຕົກລົງ :**

## ໝວດທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 :** ຂໍ້ຕົກລົງສະບັບນີ້ ກໍານົດລະບຽບການນໍາເຂົ້າ ແລະ ການຄຸ້ມຄອງນໍາໃຊ້ແຮງງານຕ່າງປະເທດທີ່ມາເຮັດວຽກຢູ່ ສປປ ລາວ ເພື່ອຕອບສະໜອງຄວາມຕ້ອງການແຮງງານທີ່ມີສີມືອັນຈໍາເປັນ ໃຫ້ຜູ້ລົງທຶນສາມາດດໍາເນີນທຸລະກິດ ແລະ ຮັບປະກັນໃຫ້ແຮງງານລາວໄດ້ມີໂອກາດ ຮຽນຮູ້ດ້ານວິຊາການ-ເຕັກນິກນໍາແຮງງານຕ່າງປະເທດທີ່ເຮັດວຽກຢູ່ຫົວໜ່ວຍແຮງງານ ແລະ ໂຄງການຕ່າງໆ.

**ມາດຕາ 2 :** ຜູ້ໃຊ້ແຮງງານຕ່າງປະເທດແມ່ນບຸກຄົນ ຫລື ນິຕິບຸກຄົນ, ນັບທັງຄົນລາວ ແລະ ຄົນຕ່າງປະເທດ ທີ່ເປັນຫົວໜ່ວຍ ການຜະລິດ, ທຸລະກິດ ແລະ ບໍລິການ ຂອງທຸກພາກສ່ວນເສດຖະກິດ-ສັງຄົມທີ່ລົງທຶນ ແລະ ດໍາເນີນທຸລະກິດຖືກຕ້ອງຕາມລະບຽບ, ກົດໝາຍຂອງ ສປປ ລາວ.

**ມາດຕາ 3 :** ຜູ້ອອກແຮງງານຕ່າງປະເທດ ແມ່ນຄົນຕ່າງປະເທດ ທີ່ໄດ້ຮັບອະນຸຍາດ ຖືກຕ້ອງຕາມກົດໝາຍວ່າດ້ວຍ ແຮງງານ ແລະ ລະບຽບການທີ່ລັດຖະບານໄດ້ກໍານົດໃຫ້ເຂົ້າມາເຮັດວຽກຕາມຫົວໜ່ວຍແຮງງານ ແລະໂຄງການຕ່າງໆຢູ່ໃນ ສປປ ລາວ, ຊຶ່ງໄດ້ຮັບຄ່າຕອບແທນເປັນເງິນເດືອນ ຫລື ຄ່າແຮງງານ ຜູ້ເຂົ້າມາທ່ອງທ່ຽວ, ມາຢ້ຽມຢາມ, ມາຄ້າຂາຍທີ່ບໍ່ຖືກຕ້ອງຕາມລະບຽບ, ກົດໝາຍ ຫລື ຈຸດປະສົງອື່ນ ຈະບໍ່ແມ່ນແຮງງານຕ່າງປະເທດ.

## ໝວດທີ II
## ເງື່ອນໄຂ ແລະ ລະບຽບການຂໍອະ
## ນຸຍາດນຳເຂົ້າແຮງງານຕ່າງປະເທດ ທີ່ເຮັດວຽກຢູ່ ສປປ ລາວ

**ມາດຕາ 4 :** ເງື່ອນໄຂການຂໍອະນຸຍາດນຳເຂົ້າ ແລະ ນຳໃຊ້ແຮງງານຕ່າງປະເທດໃຫ້ປະຕິບັດດັ່ງນີ້ :

- ຕ້ອງແມ່ນບຸກຄົນ ຫລື ນິຕິບຸກຄົນ, ນັບທັງຄົນລາວ ແລະ ຄົນຕ່າງປະເທດ ທີ່ເປັນຫົວໜ່ວຍການຜະລິດ, ທຸລະກິດ, ບໍລິການ ແລະໂຄງການຊ່ວຍເຫລືອລ້າຈຶ່ງມີສິດຂໍອະນຸຍາດນຳເຂົ້າ ແລະ ນຳໃຊ້ແຮງງານຕ່າງປະເທດ. ບຸກຄົນທີ່ຖືກມອບສິດ ແລ່ນຂໍອະນຸຍາດນຳເຂົ້າ ແລະ ຂໍນຳໃຊ້ແຮງງານຕ່າງປະເທດຕ້ອງແມ່ນພະນັກງານຂອງຫົວໜ່ວຍແຮງງານ ຫລື ໂຄງການດັ່ງກ່າວ.
- ເປັນຫົວໜ່ວຍແຮງງານ ຫລື ໂຄງການທີ່ໄດ້ຮັບອະນຸຍາດດຳເນີນທຸລະກິດຢ່າງຖືກຕ້ອງຕາມກົດໝາຍ, ຕ້ອງມີແຜນນຳໃຊ້ແຮງງານຕ່າງປະເທດປະຈຳປີ ແລະ ໄດ້ຮັບອະນຸຍາດໂກຕາ ຈາກກະຊວງແຮງງານ ແລະ ສະຫວັດດີການສັງຄົມ.

**ມາດຕາ 5 :** ເງື່ອນໄຂແຮງງານຕ່າງປະເທດທີ່ມາເຮັດວຽກຢູ່ ສປປ ລາວ ມີດັ່ງນີ້ :

- ເປັນແຮງງານທີ່ມີສີມື, ມີລະດັບວິຊາສະເພາະທີ່ສອດຄ່ອງກັບຕຳແໜ່ງງານທີ່ຕ້ອງການ;
- ມີຊີວະປະຫວັດຈະແຈ້ງດີ, ບໍ່ຫລົບຫລີກຄະດີ ເພື່ອເຂົ້າມາເຮັດວຽກຢູ່ ສປປ ລາວ;
- ຕ້ອງມີອາຍຸແຕ່ 20 ປີ ຂຶ້ນໄປ;
- ຕ້ອງຖ່າຍທອດຄວາມຮູ້ດ້ານວິຊາການ ເຕັກນິກ ໃຫ້ແຮງງານລາວ;
- ມີສຸຂະພາບສົມບູນ ບໍ່ເປັນພະຍາດຕິດແປດ.

**ມາດຕາ 6 :** ການຂໍອະນຸຍາດໂກຕານຳເຂົ້າແຮງງານຕ່າງປະເທດຂອງຫົວໜ່ວຍແຮງງານມີດັ່ງນີ້ :

- ໃບຄຳຮ້ອງຂໍອະນຸຍາດ ໂກຕາ ຂອງຫົວໜ່ວຍແຮງງານ;
- ແຜນການນຳໃຊ້ຜູ້ອອກແຮງງານຕ່າງປະເທດ ສະເໜີຕໍ່ ກົມພັດທະນາສີມືແຮງງານ ແລະຈັດຫາງານ, ຖ້າຈະນຳໃຊ້ຜູ້ອອກແຮງງານຢູ່ ແຂວງ ໃຫ້ຜ່ານຄຳເຫັນຂອງພະແນກແຮງງານ ແລະສະຫວັດດີການສັງຄົມແຂວງທີ່ກ່ຽວຂ້ອງ;
- ໃບອະນຸຍາດດຳເນີນທຸລະກິດ ຫລື ໃບສັນຍາຮັບເໝົາໂຄງການໂດຍມີການຢັ້ງຢືນຈາກເຈົ້າຂອງ ໂຄງການທີ່ກ່ຽວຂ້ອງ ( ຖ້າມີ );
- ສຳເນົາໃບອະນຸຍາດລົງທຶນ;
- ສຳເນົາໃບອະນຸຍາດສ້າງຕັ້ງໂຮງງານ ຫລື ບໍລິສັດ;
- ສຳເນົາທະບຽນອາກອນພາຍໃນ.

ມາດຕາ 7 : ຫົວໜ່ວຍແຮງງານ ແລະ ໂຄງການຕ່າງໆ ທີ່ຕ້ອງການນຳເຂົ້າ ແລະ ນຳໃຊ້ແຮງງານຕ່າງປະເທດໃນຕຳແໜ່ງງານທີ່ແຮງງານລາວບໍ່ສາມາດເຮັດໄດ້ ຕ້ອງປະຕິບັດຕາມ ໃບອະນຸຍາດໂກຕ້າ ທີ່ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ໄດ້ອອກໃຫ້ ຄິດໄລ່ຕາມອັດຕາສ່ວນສູງສຸດບໍ່ເກີນ 10% ສຳລັບແຮງງານດ້ານຮ່າງກາຍ ແລະ ສູງສຸດບໍ່ເກີນ 20% ສຳລັບແຮງງານດ້ານມັນສະໝອງຂອງຈຳນວນແຮງງານທັງໝົດຢູ່ຫົວໜ່ວຍແຮງງານ.

ການນຳໃຊ້ແຮງງານຕ່າງປະເທດຕ້ອງມີແຜນຖ່າຍທອດຄວາມຮູ້ດ້ານວິຊາການ-ເຕັກນິກໃຫ້ຜູ້ອອກແຮງງານລາວແຕ່ເລີ່ມຕົ້ນຈົນສິ້ນສຸດສັນຍາ ເພື່ອສາມາດແທນຜູ້ອອກແຮງງານຕ່າງປະເທດໄດ້.

ມາດຕາ 8 : ຂັ້ນຕອນການຂໍອະນຸຍາດນຳເຂົ້າ ແລະ ຂຶ້ນທະບຽນແຮງງານຕ່າງປະເທດ ໃຫ້ປະຕິບັດດັ່ງນີ້:

- ຂໍອະນຸຍາດນຳເຂົ້າແຮງງານຕ່າງປະເທດ ຈາກະຊວງແຮງງານ ແລະສະຫວັດດີການສັງຄົມ;
- ຕ້ອງຜ່ານລາຍຊື່ນຳ ກົມຕຳຫລວດກວດຄົນເຂົ້າເມືອງ, ກະຊວງປ້ອງກັນຄວາມສະຫງົບ ເພື່ອກວດກາຕາມລະບຽບການ;
- ຕ້ອງຜ່ານກະຊວງການຕ່າງປະເທດ ເພື່ອຂໍວິຊາແຮງງານ ( LAB2 ) ຢູ່ສະຖານທູດລາວ ຫລື ສະຖານກົງສູນໃຫຍ່ລາວທີ່ຕ່າງປະເທດ, ຍົກເວັ້ນໃນກໍລະນີຈຳເປັນໃຫ້ເອົາວິຊາກັບດ່ານສາກົນໄດ້. ພາຍຫລັງແຮງງານຕ່າງປະເທດເຂົ້າມາ ສປປ ລາວ ແລ້ວ ໃຫ້ຂໍວິຊາເຂົ້າ-ອອກຫລາຍເທື່ອ ນຳກົມກົງສູນກະຊວງການຕ່າງປະເທດ;
- ຂຶ້ນທະບຽນ ແລະ ບັດອະນຸຍາດເຮັດວຽກ ນຳກະຊວງແຮງງານ ແລະ ສະຫວັດດີການສັງຄົມ ຫຼື ພະແນກແຮງງານ ແລະສະຫວັດດີການສັງຄົມແຂວງ ຫລື ນະຄອນຫລວງ;
- ອອກບັດອະນຸຍາດຢູ່ລາວຊົ່ວຄາວນຳ ກົມຕຳຫລວດກວດຄົນເຂົ້າເມືອງ ກະຊວງປ້ອງກັນຄວາມສະຫງົບ;
- ສະເໜີແຜນຄວາມຕ້ອງການແຮງງານຕ່າງປະເທດຂອງໂຄງການລົງທຶນຕ່າງໆນຳກະຊວງແຜນການ ແລະ ການລົງທຶນ.

ມາດຕາ 9 : ການອະນຸຍາດນຳເຂົ້າແຮງງານຕ່າງປະເທດຕ້ອງປະກອບເອກະສານດັ່ງນີ້ :

- ໃບອະນຸຍາດ ໂກຕ້າ ທີ່ກົມພັດທະນາສີມືແຮງງານ ແລະ ຈັດຫາງານໄດ້ອອກໃຫ້;
- ໃບຄຳຮ້ອງຂໍອະນຸຍາດນຳເຂົ້າແຮງງານຕ່າງປະເທດ;
- ບັນຊີລາຍຊື່ຜູ້ອອກແຮງງານຕ່າງປະເທດ;
- ໃບຮັບປະກັນຈາກຜູ້ໃຊ້ແຮງງານ;
- ສັນຍາແຮງງານ;
- ຊີວະປະຫວັດຂອງຜູ້ອອກແຮງງານຕ່າງປະເທດ;
- ໃບຢັ້ງຢືນສຸຂະພາບ ຂອງຜູ້ອອກແຮງງານຕ່າງປະເທດ;
- ສຳເນົາ ໜັງສືຜ່ານແດນ ( passport );
- ຮູບຂະໜາດ 3X4 ( 4 ໃບ).

## ໝວດທີ III
## ສິດອະນຸຍາດນຳເຂົ້າ ແລະ ນຳໃຊ້ແຮງງານຕ່າງປະເທດ

**ມາດຕາ 10 :** ກົມພັດທະນາສີມືແຮງງານ ແລະ ຈັດຫາງານ ມີສິດ ແລະ ໜ້າທີ່ດັ່ງນີ້ :

- ຄົ້ນຄວ້າພິຈາລະນາອອກອະນຸຍາດ ໂກຕ້າ ປະຈຳປີ ໃຫ້ທຸກຫົວໜ່ວຍແຮງງານ ແລະ ບັນດາໂຄງການຕ່າງໆໃນທົ່ວປະເທດ ແລະ ກຳນົດເວລາຄົ້ນຄວ້າບໍ່ເກີນ ສາມ ອາທິດ;
- ຄົ້ນຄວ້າພິຈາລະນາອະນຸຍາດນຳເຂົ້າບໍ່ເກີນໜຶ່ງອາທິດ ແລະ ຂຶ້ນທະບຽນ ອອກບັດອະນຸຍາດເຮັດວຽກໃຫ້ແຮງງານຕ່າງປະເທດ ທີ່ເຮັດວຽກຢູ່ບັນດາຫົວໜ່ວຍແຮງງານ ແລະ ໂຄງການທີ່ມີໃບອະນຸຍາດດຳເນີນທຸລະກິດຂອງຂັ້ນສູນກາງ ສູງສຸດບໍ່ເກີນ ສອງ ອາທິດ ແລະ ຕໍ່ບັດອະນຸຍາດເຮັດວຽກສູງສຸດບໍ່ເກີນ ສີ່ ວັນລັດຖະການ;
- ພິມບັດອະນຸຍາດເຮັດວຽກສຳລັບແຮງງານຕ່າງປະເທດຢູ່ ສປປ ລາວ ໃຫ້ພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ ແລະ ນະຄອນຫລວງ;
- ປະຕິບັດໜ້າທີ່ອື່ນໆ ຕາມພາລະບົດບາດ, ຄວາມຮັບຜິດຊອບຂອງຕົນຕາມການມອບໝາຍຂອງຂັ້ນເທິງ.

**ມາດຕາ 11 :** ກົມຄຸ້ມຄອງແຮງງານ ມີສິດ ແລະ ໜ້າທີ່ດັ່ງນີ້ :

- ກວດກາການນຳໃຊ້ແຮງງານຕ່າງປະເທດຢູ່ບັນດາຫົວໜ່ວຍແຮງງານ ແລະ ໂຄງການຕ່າງໆ ຕາມບັນຊີ, ຕຳແໜ່ງງານ ສະຖານທີ່, ກຳນົດເວລາທີ່ໄດ້ຮັບອະນຸຍາດໃຫ້ນຳເຂົ້າແລະນຳໃຊ້;
- ຄຸ້ມຄອງການນຳໃຊ້ແຮງງານຕ່າງປະເທດ ໃຫ້ປະຕິບັດຕາມສັນຍາແຮງງານ, ລະບຽບ, ກົດໝາຍວ່າດ້ວຍ ແຮງງານ ແລະ ກົດໝາຍກ່ຽວຂ້ອງຂອງ ສປປ ລາວ;
- ປະຕິບັດໜ້າທີ່ອື່ນໆຕາມພາລະບົດບາດ ແລະ ຄວາມຮັບຜິດຊອບໃນຂະແໜງການຂອງຕົນ.

**ມາດຕາ 12 :** ພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ, ນະຄອນຫລວງ ມີສິດ ແລະ ໜ້າທີ່ດັ່ງນີ້ :

- ສົມທົບກັບພະແນກການທີ່ກ່ຽວຂ້ອງ, ບັນດາຫົວໜ່ວຍແຮງງານ ແລະ ໂຄງການຕ່າງໆ ທີ່ຂຶ້ນກັບຄວາມ ຮັບຜິດຊອບຂອງທ້ອງຖິ່ນຕົນ ຂຶ້ນແຜນຄວາມຕ້ອງການນຳເຂົ້າ ແລະ ນຳໃຊ້ແຮງງານຕ່າງປະເທດສະເໜີໃຫ້ກົມພັດທະນາສີມືແຮງງານ ແລະ ຈັດຫາງານ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເພື່ອພິຈາລະນາອະນຸມັດເປັນໂກຕາລວມປະຈຳປີ ໃນກໍລະນີບໍ່ມີແຜນການດັ່ງກ່າວຂ້າງເທິງນັ້ນ ກົມພັດທະນາສີມືແຮງງານ ແລະ ຈັດຫາງານຈະບໍ່ຮັບພິຈາລະນາຢ່າງເດັດຂາດ;
- ອອກອະນຸຍາດນຳເຂົ້າ ແລະ ນຳໃຊ້ແຮງງານຕ່າງປະເທດໃຫ້ຫົວໜ່ວຍແຮງງານ ແລະ ໂຄງການທີ່ມີໃບອະນຸຍາດດຳເນີນທຸລະກິດຂອງຂັ້ນ ແຂວງ ຫລື ນະຄອນຫລວງອອກໃຫ້ ແລະ ຕາມໂກຕາທີ່ໄດ້ອອກໃຫ້ໂດຍກົມ ພັດທະນາສີມືແຮງງານ ແລະ ຈັດຫາງານ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ;

- ເຜີຍແຜ່ຂໍ້ຕົກລົງສະບັບນີ້ ແລະ ກວດກາການຈັດຕັ້ງປະຕິບັດ ແບ່ງຄວາມຮັບຜິດຊອບໃຫ້ຂັ້ນເມືອງຕາມຄວາມເຫມາະສົມເພື່ອຕິດຕາມ ຄຸ້ມຄອງ ເກັບກຳຂໍ້ມູນ, ສະໜອງຂໍ້ມູນ ແລະ ລາຍງານໃຫ້ກົມພັດທະນາສີມືແຮງງານ ແລະ ຈັດຫາງານ ແລະ ກົມຄຸ້ມຄອງແຮງງານ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມຢ່າງເປັນປົກກະຕິ;
- ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມເມືອງຕ້ອງເປັນເຈົ້າການໃນການຕິດຕາມກວດກາການນຳ ໃຊ້ແຮງງານຕ່າງປະເທດ, ການຄິດໄລ່ຂໍນຳເຂົ້າ, ການສະໜອງຕຳແໜ່ງງານໃຫ້ແຮງງານລາວເຂົ້າເຮັດວຽກ ແລະ ການກັບຄືນຂອງແຮງງານຕ່າງປະເທດເມື່ອຫມົດອາຍຸການເຮັດວຽກຕາມສັນຍາ.

ມາດຕາ 13: ຫົວໜ່ວຍແຮງງານ ແລະ ໂຄງການຕ່າງໆ ມີສິດ, ໜ້າທີ່ນຳໃຊ້ ແລະ ຄຸ້ມຄອງແຮງງານຕ່າງປະເທດທີ່ຢູ່ ໃນຄວາມຮັບຜິດຊອບຂອງຕົນ ດັ່ງນີ້ :
- ຂຶ້ນບັນຊີແຜນຄວາມຕ້ອງການ, ປະກອບເອກະສານຂໍໂກຕາອະນຸຍາດນຳເຂົ້າ ແລະ ນຳໃຊ້ແຮງງານຕ່າງປະເທດ ປະຈຳປີ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ;
- ເຜີຍແຜ່, ແນະນຳ ການປະຕິບັດຕາມ ລະບຽບ, ກົດຫມາຍ ແລະ ຮີດຄອງປະເພນີຂອງ ສປປ ລາວ;
- ລາຍງານຂໍ້ມູນຂ່າວສານແຮງງານຕ່າງປະເທດທີ່ກຳລັງນຳໃຊ້ ແລະ ກັບຄືນປະເທດ ໃຫ້ອົງການຄຸ້ມຄອງແຮງງານ ຫລື ອົງການລັດທີ່ກ່ຽວຂ້ອງໃນແຕ່ລະໄລຍະ;
- ຈັດຕັ້ງໃຫ້ແຮງງານຕ່າງປະເທດຖ່າຍທອດຄວາມຮູ້ດ້ານວິຊາການໃຫ້ແຮງງານລາວ;
- ນຳໃຊ້ແຮງງານຕ່າງປະເທດໃຫ້ຖືກສະຖານທີ່ຕາມການອະນຸຍາດ, ໃນກໍລະນີມີການປ່ຽນສະຖານທີ່ເຮັດວຽກ ຫລື ມອບໂອນແຮງງານຕ່າງປະເທດ ໃຫ້ຜູ້ໃຊ້ແຮງງານຄົນອື່ນ ຕ້ອງໄດ້ຮັບອະນຸຍາດຈາກອົງການຄຸ້ມຄອງແຮງງານ;
- ຮັບຜິດຊອບການສົ່ງກັບຄືນປະເທດເດີມ ພາຍຫລັງຫມົດກຳນົດເວລານຳໃຊ້ ຈາກອົງການຄຸ້ມຄອງແຮງງານ ຫລື ອົງການລັດທີ່ກ່ຽວຂ້ອງ.

## ໝວດທີ IV
## ການຂໍຂຶ້ນທະບຽນ ແລະ ອອກບັດ ອະນຸຍາດເຮັດວຽກໃຫ້ແຮງງານຕ່າງປະເທດ

ມາດຕາ 14 : ຫົວໜ່ວຍແຮງງານ ແລະ ໂຄງການຕ່າງໆ ທີ່ຂໍຂຶ້ນທະບຽນ ແລະ ອອກບັດອະນຸຍາດເຮັດວຽກຂອງແຮງງານຕ່າງປະເທດຕ້ອງປະຕິບັດດັ່ງນີ້ :
- ແຈ້ງບັນຊີລາຍຊື່ຈຳນວນແຮງງານຕ່າງປະເທດ, ຕຳແໜ່ງງານ, ສັນຊາດ, ກຳນົດເວລາເຮັດວຽກທີ່ຕົນເອງຈະນຳໃຊ້ເພື່ອຂໍຂຶ້ນທະບຽນນຳ ກົມພັດທະນາສີມືແຮງງານ ແລະ ຈັດຫາງານ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ສຳລັບຫົວໜ່ວຍແຮງງານ ແລະ ໂຄງການທີ່ຂຶ້ນກັບແຂວງ ຫລື ນະຄອນຫລວງ ໃຫ້ໄປຂຶ້ນທະບຽນນຳພະແນກແຮງງານ ແລະ ສະຫວັດດີ

ການສັງຄົມແຂວງ ຫຼື ນະຄອນຫຼວງພາຍໃນກຳນົດ 30 ວັນ ນັບແຕ່ມື້ແຮງງານຕ່າງປະເທດເຂົ້າມາ ສປປ ລາວ;

- ປະກອບເອກະສານຂໍບັດອະນຸຍາດເຮັດວຽກໃຫ້ແຮງງານຕ່າງປະເທດຕາມແບບຟອມທີ່ກົມພັດທະນາສີມືແຮງງານ ແລະ ຈັດຫາງານອອກໃຫ້;
- ຫົວໜ່ວຍແຮງງານ ແລະ ໂຄງການຕ່າງໆ ທີ່ບໍ່ປະຕິບັດຕາມເງື່ອນໄຂຂ້າງເທິງນີ້ ບໍ່ອະນຸຍາດໃຫ້ນຳໃຊ້ແຮງງານຕ່າງປະເທດຢ່າງເດັດຂາດ.

ມາດຕາ 15 : ຫົວໜ່ວຍແຮງງານ ແລະ ໂຄງການຕ່າງໆ ທີ່ຂໍຂຶ້ນທະບຽນ ແລະ ອອກບັດອະນຸຍາດເຮັດວຽກໃຫ້ແຮງງານ ຕ່າງປະເທດ ຕ້ອງປະກອບເອກະສານດັ່ງນີ້ :

- ໃບຄຳຮ້ອງຂໍຂຶ້ນທະບຽນ ແລະ ອອກບັດອະນຸຍາດເຮັດວຽກ;
- ໃບອະນຸຍາດນຳເຂົ້າແຮງງານຕ່າງປະເທດອອກໃຫ້ໂດຍ ກົມພັດທະນາສີມືແຮງງານ ແລະ ຈັດຫາງານ ( ເອກະສານຄັດຕິດ );
- ໃບຢັ້ງຢືນການກວດສອບປະຫວັດຈາກກະຊວງປ້ອງກັນຄວາມສະຫງົບ;
- ສຳເນົາໜັງສືຜ່ານແດນ (Passport ) ແລະວີຊາແຮງງານ ( Visa LAB2 );

ມາດຕາ 16 : ຫົວໜ່ວຍແຮງງານ ແລະ ໂຄງການຕ່າງໆ ຈະຂໍຕໍ່ບັດອະນຸຍາດເຮັດວຽກໃຫ້ແຮງງານຕ່າງປະເທດຕ້ອງມີເອກະສານດັ່ງນີ້ :

- ໃບຄຳຮ້ອງຂໍຕໍ່ບັດອະນຸຍາດເຮັດວຽກ;
- ບັດອະນຸຍາດເຮັດວຽກຂອງແຮງງານຕ່າງປະເທດ;
- ສຳເນົາໜັງສືຜ່ານແດນ ( Passport );
- ສຳເນົາໃບເສຍອາກອນເງິນເດືອນ;
- ໃບຢັ້ງຢືນພຶດຕິກຳຂອງແຮງງານຕ່າງປະເທດຈາກຜູ້ໃຊ້ແຮງງານ;
- ໃບສັນຍາແຮງງານ (ສືບຕໍ່ ).

ມາດຕາ 17 : ການເກັບຄ່າທຳນຽມຕ່າງໆໃຫ້ປະຕິບັດດັ່ງນີ້ :

- ແບບຟອມ ຄຳຮ້ອງຂໍໂກຕາ, ຂໍນຳເຂົ້າ, ຂໍຂຶ້ນທະບຽນ ແລະ ອອກບັດອະນຸຍາດເຮັດວຽກຊຸດລະ10,000 ກີບ;
- ຂຶ້ນທະບຽນ ແລະ ອອກບັດອະນຸຍາດເຮັດວຽກ 10 ໂດລາສະຫະລັດຕໍ່ຄົນຕໍ່ເດືອນ;
- ຕໍ່ອານຸຍາດເຮັດວຽກ 2 ໂດລາສະຫະລັດຕໍ່ຄົນຕໍ່ເດືອນ.( ອີງຕາມລັດຖະບັນຍັດຂອງປະທານປະເທດ ແຫ່ງ ສປປ ລາວ ສະບັບເລກທີ 02/ສປປ, ລົງວັນທີ 27/11/2002 );
- ສຳລັບແຮງງານຫວຽດນາມທີ່ເຮັດວຽກໃນຂົງເຂດການລົງທຶນຂອງຫວຽດນາມຢູ່ ສປປ ລາວ ຫລື ໂຄງການຮ່ວມມືລັດຖະບານລາວ-ຫວຽດນາມໃຫ້ເກັບ 48 ໂດລາສະຫະລັດຕໍ່ຄົນຕໍ່ປີ ( ໂດຍຄິດໄລ່ການຂຶ້ນທະບຽນ 3 ເດືອນເທົ່າກັບ 30 ໂດລາສະຫະລັດ ແລະ ຕໍ່ອາຍຸ 9 ເດືອນ 18 ໂດລາສະຫະລັດ );

- ສຳລັບແຮງງານຫວຽດນາມ ແລະ ກຳປູເຈຍຢູ່ເຂດ 3 ຫຼ່ຽມພັດທະນາ ກຳປູເຈຍ -ລາວ- ຫວຽດນາມ ໃຫ້ເກັບ 40 ໂດລາສະຫະລັດຕໍ່ຄົນຕໍ່ປີ ( ຕາມແຈ້ງການ ເລກທີ 564/ຄລບ, ລົງວັນທີ 10 ເມສາ 2007 ຂອງຄະນະເລຂາທິການລັດຖະບານ ສຳນັກງານນາຍົກລັດຖະມົນຕີ).

## ໝວດທີ V
## ການຄຸ້ມຄອງການນຳໃຊ້ແຮງງານຕ່າງປະເທດ

ມາດຕາ 18 : ການຄຸ້ມຄອງການນຳໃຊ້ແຮງງານຕ່າງປະເທດຕ້ອງປະຕິບັດດັ່ງນີ້ :

- ແຮງງານຕ່າງປະເທດທີ່ມາເຮັດວຽກຢູ່ ສປປ ລາວ ອະນຸຍາດໃຫ້ຕາມສັນຍາແຮງງານ ຄັ້ງໜຶ່ງບໍ່ເກີນ 12 ເດືອນ ແລະ ສາມາດຂໍຕໍ່ກຳນົດເວລາເຮັດວຽກໄດ້ຄັ້ງລະ 6 ຫາ 12 ເດືອນ;
- ກໍລະນີທີ່ເຫັນວ່າຜູ້ອອກແຮງງານຍັງມີຄວາມຈຳເປັນສຳລັບການດຳເນີນທຸລະກິດ, ຈະມີການຂະຫຍາຍການ ຜະລິດ, ຈະນຳໃຊ້ເຕັກນິກ -ເຕັກໂນໂລຊີໃໝ່ ກໍອາດຈະຮັບພິຈາລະນາໃຫ້ຕໍ່ກຳນົດເວລາເຮັດວຽກຕາມຄວາມຈຳເປັນຂອງວຽກງານໂດຍສອດຄ່ອງກັບສັນຍາແຮງງານ;
- ການອະນຸຍາດໃຫ້ແຮງງານຕ່າງປະເທດມາເຮັດວຽກຢູ່ ສປປ ລາວ ມີກຳນົດເວລາເຮັດວຽກ 2 ປີ ແລະ ຕໍ່ໄດ້ອີກ 2 ປີ ແຕ່ສູງສຸດບໍ່ເກີນ 4 ປີ. ຖ້າຮອດກຳນົດ 4 ປີແລ້ວ ຕ້ອງໄດ້ກັບຄືນປະເທດເດີມ ໂດຍບໍ່ຮັບພິຈາລະນາຕໍ່ບັດອະນຸຍາດເຮັດວຽກຢ່າງເດັດຂາດ ຈົນກວ່າຈະເຖິງ 2 ປີ ຈຶ່ງຈະພິຈາລະນາ.

ມາດຕາ 19 : ການຂໍປ່ຽນຕຳແໜ່ງງານ, ການຍ້າຍສະຖານທີ່ເຮັດວຽກ, ການມອບໂອນແຮງງານຕ່າງປະເທດໃຫ້ຜູ້ໃຊ້ແຮງງານອື່ນຄຸ້ມຄອງນຳໃຊ້ ຕ້ອງປະຕິບັດດັ່ງນີ້ :

- ສຳລັບແຮງງານຕ່າງປະເທດທີ່ຂຶ້ນກັບຫົວໜ່ວຍແຮງງານ ແລະ ໂຄງການຂັ້ນສູນກາງ ຕ້ອງຂໍອະນຸຍາດຈາກກົມພັດທະນາສີມືແຮງງານ ແລະ ຈັດຫາງານ;
- ແຮງງານຕ່າງປະເທດທີ່ຂຶ້ນກັບແຂວງ, ນະຄອນຫລວງ ຕ້ອງຂໍອະນຸຍາດຈາກ ພະແນກແຮງງານ ແລະ ສະຫວັດດີການສັງຄົມ ແຂວງ, ນະຄອນຫລວງ.

ມາດຕາ 20 : ແຮງງານຕ່າງປະເທດທີ່ເຂົ້າມາເຮັດວຽກຢູ່ ສປປ ລາວ ໃຫ້ປະຕິບັດດັ່ງນີ້ :

- ເຄົາລົບລະບຽບ, ກົດໝາຍ, ຮີດຄອງປະເພນີຂອງ ສປປ ລາວ;
- ຖ່າຍທອດຄວາມຮູ້ດ້ານວິຊາການໃຫ້ແຮງງານລາວ;
- ກັບຄືນປະເທດເດີມ ພາຍຫລັງສິ້ນສຸດກຳນົດເວລາເຮັດວຽກ 15 ວັນ;
- ຖ້າຫາກບໍ່ສາມາດກັບຄືນໄດ້ພາຍໃນກຳນົດເວລາດັ່ງກ່າວຕ້ອງຮັບຜິດຊອບຕາມລະບຽບກົດໝາຍຂອງ ສປປ ລາວ.

## ໝວດທີ VI
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

ມາດຕາ 21: ມາດຕະການຕໍ່ຫົວໜ່ວຍແຮງງານ, ໂຄງການຕ່າງໆ, ບຸກຄົນ ແລະ ນິຕິບຸກຄົນໃຫ້ປະຕິບັດຂໍ້ຫ້າມຕ່າງໆດັ່ງນີ້ :

- ຫ້າມນຳເຂົ້າ ແລະ ຂຶ້ນທະບຽນອອກບັດອະນຸຍາດເຮັດວຽກໃຫ້ແຮງງານຕ່າງປະເທດໂດຍບໍ່ໄດ້ຮັບອະນຸຍາດຈາກ ກົມພັດທະນາສີມືແຮງງານ ແລະ ຈັດຫາງານ ຫລື ພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ ແລະນະຄອນຫລວງ;
- ຫ້າມອອກບັດອະນຸຍາດເຮັດວຽກໃຫ້ຄົນຕ່າງປະເທດທີ່ເຂົ້າມາໃນ ສປປ ລາວ ເພື່ອມາທ່ອງທ່ຽວ, ຢ້ຽມຢາມ ຫລື ລັກສະນະບຸກຄົນສ່ວນຕົວ ແລະ ເຂົ້າມາເຮັດວຽກທີ່ຂັດກັບລະບຽບກົດໝາຍ;
- ຫ້າມແຮງງານຕ່າງປະເທດເຂົ້າມາເຮັດວຽກໃນຂົງເຂດອາຊີບທີ່ສະຫງວນໄວ້ໃຫ້ພົນລະເມືອງລາວເດັດຂາດ.

ມາດຕາ 22 : ມາດຕະການຕໍ່ຫົວໜ່ວຍແຮງງານ, ໂຄງການຕ່າງໆ, ບຸກຄົນ ແລະ ນິຕິບຸກຄົນທີ່ລະເມີດມີດັ່ງນີ້:

- ຜູ້ໃຊ້ແຮງງານນຳເຂົ້າແຮງງານຕ່າງປະເທດໂດຍບໍ່ໄດ້ຮັບອະນຸຍາດຈາກ ກົມພັດທະນາສີມືແຮງງານ ແລະ ຈັດຫາງານ ຫລື ພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ, ນະຄອນຫລວງ ທີ່ໄດ້ຮັບມອບສິດ, ຈະຖືກ ປັບໃໝເປັນເງິນເທົ່າກັບ 250 ໂດລາ ສະຫະລັດຕໍ່ຄົນ/ຄັ້ງ;
- ຜູ້ໃຊ້ແຮງງານ ນຳໃຊ້ແຮງງານຕ່າງປະເທດບໍ່ຖືກສະຖານທີ່ເຮັດວຽກຕາມທີ່ກຳນົດໄວ້ ໃນບັດອະນຸຍາດເຮັດວຽກຈະຖືກປັບໃໝ ເປັນເງິນກີບ ເທົ່າກັບ 200 ໂດລາສະຫະລັດ ຕໍ່ຄົນ/ຄັ້ງ;
- ຫາກໄດ້ລະເມີດອີກເປັນຄັ້ງທີສອງຈະຕັດສິດໃນການນຳໃຊ້ແຮງງານຕ່າງປະເທດ ແລະ ຈະຖືກປະຕິບັດວິໄນຕາມມາດຕາ 75 ຂອງກົດໝາຍວ່າດ້ວຍແຮງງານ ພ້ອມທັງຮັບຜິດຊອບຕໍ່ການໃຊ້ຈ່າຍ ສົ່ງຜູ້ອອກແຮງງານຕ່າງປະເທດກັບຄືນປະເທດເດີມ;
- ຜູ້ໃຊ້ແຮງງານ ນຳໃຊ້ແຮງງານຕ່າງປະເທດເກີນກຳນົດເວລາທີ່ອະນຸມັດຈະຖືກປັບໃໝເທົ່າກັບ 5 ໂດລາສະຫະລັດ ຕໍ່ຄົນ/ວັນ ຂອງຈຳນວນມື້ທີ່ເກີນ.
- ສຳລັບແຮງງານຕ່າງປະເທດທີ່ລັກເຮັດວຽກຢູ່ຕາມສະຖານທີ່ຕ່າງໆ ໂດຍບໍ່ໄດ້ຮັບອະນຸຍາດຈາກ ກົມພັດທະນາສີມືແຮງງານ ແລະ ຈັດຫາງານ ແລະ ສະຫວັດດີການສັງຄົມແຂວງ ແລະນະຄອນຫລວງຈະຖືກປັບໃໝ ເປັນເງິນກີບເທົ່າກັບ 100 ໂດລາສະຫະລັດຕໍ່ຄົນຕໍ່ຄັ້ງ;
- ບຸກຄົນ ຫລື ນິຕິບຸກຄົນ ບໍລິການຈັດຫາງານໃຫ້ແຮງງານຕ່າງປະເທດ ໂດຍບໍ່ໄດ້ຮັບອະນຸຍາດຢ່າງຖືກຕ້ອງຕາມລະບຽບກົດໝາຍຈະຖືກປັບໃໝເປັນເງິນກີບເທົ່າກັບ 300ໂດລາສະຫະລັດ;
- ແຮງງານຕ່າງປະເທດ ທີ່ກະທຳຜິດຕໍ່ລະບຽບກົດໝາຍ, ຮີດຄອງປະເພນີຂອງ ສປປ ລາວ ໃຫ້ປະຕິບັດມາດຕະການສະຖານໜັກ ຫລື ເບົາ ຕາມການຕັດສິນຂອງສານປະຊາຊົນ ແຫ່ງ ສປປ ລາວ.

## ໝວດທີ VII
## ການຈັດຕັ້ງປະຕິບັດ

ມາດຕາ 23 : ຂໍ້ຕົກລົງສະບັບນີ້ ບໍ່ມີຜົນບັງຄັບປະຕິບັດສຳລັບຜູ້ຊ່ຽວຊານ, ນັກວິຊາການຕ່າງປະເທດ ທີ່ເຂົ້າມາເຮັດວຽກຢູ່ຕາມໂຄງການຊ່ວຍເຫລືອລ້າ ໃນຂົງເຂດບໍລິການວິຊາການຂອງລັດ ແລະ ຕໍ່ຜູ້ອອກແຮງງານຕ່າງປະເທດທີ່ເຂົ້າມາເຮັດວຽກຖ່າຍທອດເຕັກນິກຕາມສັນຍາຢູ່ຫົວໜ່ວຍແຮງງານ ແລະ ອົງການຈັດ ຕັ້ງສາກົນໃດໜຶ່ງ.

ມາດຕາ 24 : ຜູ້ໃຊ້ແຮງງານ ແລະ ຜູ້ອອກແຮງງານຕ່າງປະເທດທີ່ເຮັດວຽກຢູ່ ສປປ ລາວ ຈົ່ງຮັບຮູ້ ແລະ ປະຕິບັດຕາມຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

ມາດຕາ 25 : ມອບໃຫ້ກົມພັດທະນາສີມືແຮງງານ ແລະ ຈັດຫາງານ ແລະ ພະແນກແຮງງານ ແລະ ສະຫວັດດີການ ສັງຄົມແຂວງ, ນະຄອນຫລວງ ຈັດຕັ້ງປະຕິບັດ, ເຜີຍແຜ່, ໂຄສະນາ ແລະ ແນະນຳຂໍ້ຕົກລົງສະບັບນີ້ໃຫ້ທົ່ວເຖິງ.

ມາດຕາ 26 : ຂໍ້ຕົກລົງສະບັບນີ້ປ່ຽນແທນຂໍ້ຕົກລົງສະບັບເລກທີ 749/ຮສສ ແລະ ມີຜົນບັງຄັບໃຊ້ພາຍຫລັງ 60 ວັນ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປຈົນກວ່າຈະມີການປ່ຽນແປງໃໝ່ ແລະ ທຸກຂໍ້ຕົກລົງທີ່ຜ່ານມາຫາກຂັດກັບເນື້ອໃນຂອງຂໍ້ຕົກລົງສະບັບນີ້ ແມ່ນຖືກລົບລ້າງ.

ລັດຖະມົນຕີວ່າການ
ກະຊວງແຮງງານ ແລະ ສະຫວັດດີການສັງຄົມ

ອ່ອນຈັນ ທຳມະວົງ